ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ
ກົມສິນລະປະກຳ

# ເພງລາວ

# LAO SONG

## ສະໄໝການປະຕິວັດຊາດ ປະຊາທິປະໄຕ ແລະ ປົກປັກຮັກສາ ສ້າງສາປະເທດຊາດ

ຊຸດ I

ຜົນງານປະພັນ
ສຸບັນ ສຸວັນນະວົງ


ສັນຕິພາບ
ເອກະລາດ
ປະຊາທິປະໄຕ
ເອກະພາບ
ວັດທະນາຖາວອນ
ສາທາລະນະລັດ ປະຊາທິປະໄຕ
ປະຊາຊົນລາວ





ພະນະທ່ານໄກສອນພົມວິຫານ
ອາດີດປະທານພັກປະຊາຊົນປະຕິວັດລາວ

# <u>ຄຳນຳ</u>

ບັນດາທ່ານ ແລະ ນັກສຶກສາທີ່ຮັກແພງ ແລະ ນັບຖື.

ເນື່ອງໃນໂອກາດທີ່ທົ່ວພັກ, ທົ່ວກອງທັບ ແລະ ປວງຊົນບັນດາເຜົ່າໃນທົ່ວປະເທດ ພວມເບີກບານມ່ວນຊື່ນກະກຽມສະເຫຼີມສະຫຼອງວັນບຸນໃຫຍ່ຂອງຊາດ ແລະ ຂອງພັກ ຢ່າງຕັ້ງໜ້າ ໂດຍສະເພາະແມ່ນວັນສ້າງຕັ້ງພັກປະຊາຊົນປະຕິວັດລາວຄົບຮອບ 50 ປີ, ວັນຊາດ ທີ 2 ທັນວາ ຄົບຮອບ 30 ປີ ແລະ ວັນເກີດທ່ານ ໄກສອນ ພົມວິຫານຄົບຮອບ 85 ປີນີ້ ສະຫາຍ ສຸບັນ ສຸວັນນະວົງ ໄດ້ລວບລວມພິມເພງຮ້ອງລາວລະບອບໃໝ່ຊຸດນີ້ອອກມີຄື: ທ່ານ ອາວຸໂສ, ເຢັນສະບາຍຊາວນາ, ດາວລ້ອມເດືອນ, ເຜົ່າລາວເອີຍ ແລະ ອື່ນໆ...

ຂ້າພະເຈົ້າເຫັນວ່າ: ມີສາລະ ແລະ ຄຸນປະໂຫຍດຫຼາຍແກ່ວົງການປະດິດແຕ່ງເພງຮ້ອງຂອງລາວເຮົາ ເພາະວ່າໃນແຕ່ລະບົດເພງຂອງຜູ້ກ່ຽວແຕ່ງມານັ້ນມັນຖືກຕ້ອງກັບ ສະພາບຕົວຈິງ, ຖືກກັບແນວທາງສິລະປະວັດທະນະທຳຊາດກ້າວໜ້າ ໃນລະບອບປະຊາ ທິປະໄຕ ປະຊາຊົນລາວພວກເຮົາ ແລະ ສອດຄ່ອງກັບຄວາມໄອ້ລົມຂອງທ່ານ ໄກສອນ ພົມວິຫານ ທີ່ເຄົາ ລົບຮັກຂອງພວກເຮົາ ໂອ້ລົມຕໍ່ກອງສິລະປະສູນກາງຄັ້ງວັນທີ 28/11/1989 ໃນເວລາທີ່ທ່ານສຳພັດມີກັບນັກສະແດງ.

ຊຶ່ງບາງຕອນສຳຄັນທ່ານໄດ້ເວົ້າວ່າ: ຈົ່ງພ້ອມກັນຄົ້ນຄວ້າ, ເສີມຂະຫຍາຍສິລະປະວັດທະນະທຳຂອງຊາດໃຫ້ຈະເລີນກ້າວໜ້າ, ການປະດິດແຕ່ງໃຫ້ມີລັກສະນະຊາດ- ກ້າວໜ້າຫຼີກເວັ້ນການປະດິດແຕ່ງ ແລະ ລີລາ ການສະແດງແບບສອດກະຈາທັງເນື້ອ ແລະ ຮູບການ.

ດັ່ງນັ້ນ, ຂ້າພະເຈົ້າຈຶ່ງເຫັນດີນຳເນີນງານ ແລະ ບົດຮຽນປະພັນເພງຂອງ ສຸບັນ ສຸວັນນະວົງ ນັ້ນຈະເປັນແບບຢ່າງອັນດີງາມບໍ່ຫຼາຍກໍນ້ອຍໃຫ້ແກ່ສິລະປະວັດທະນະທຳອິນສິດໃສຕາມຈິດໃຈ ຂໍ້ກຳນົດເລກທີ 09 ຂອງສະພາ ລັດຖະມົນຕີ ລົງວັນທີ 18 ກຸມພາ 1985 ເພື່ອປະກອບສ່ວນເຂົ້າໃນການປັບປຸງ ແລະ ບູລະນະລະບອບປະຊາທິປະໄຕ ປະຊາຊົນລາວກ້າວຂຶ້ນສູ່ສັງຄົມນິຍົມເທື່ອລະກ້າວ ໃນປະເທດເຮົາ.

ວຽງຈັນ, ວັນທີ 22/11/2005

ລັດຖະມົນຕີວ່າການ

ກະຊວງຖະແຫຼງຂ່າວ-ວັດທະນະທຳ

ໝູນແກ້ວ ອໍລະບູນ

<u>ສາລະບານ</u>


1. ເພງຊາດລາວ
2. ລາວລະບອບໃໝ່
3. 30 ປີມີໄຊ
4. ດາວລ້ອມເດືອນ
5. ວຽງໄຊເມືອງປະຫວັດສາດ
6. ເຢັນສະບາຍຊາວນາ
7. ບໍ່ລືມຜົ້ງສາລີ
8. ພູມພາບຊຽງຂວາງ
9. ຫລວງພະບາງມູນມັງຂອງຊາດ
10. ຈຳປາສັກແສນແພງ
11. ປາກເຊແດນງາມ
12. ນ້ຳໃຈຕຳຫລວດລາວ
13. ອາຊຽນນາໂປນ
14. ສັກສີແມ່ຍິງ ປ.ກ.ສ
15. ຮ່ວມໃຈຕ້ານໄພຢາເສບຕິດ
16. ຢາບ້າຢາອີ
17. ຄອຍນ້ອງ HIV
18. ໂລກເອດເຜດມານ
19. ລາວລ້ານຊ້າງ
20. ນ້ຳຂອງ ສິດຊື່ນ
21. ອະມະຕະສາມັກຄີ ລາວ VN
22. ດອກບົວຫລວງແລະດວງຈຳປາ
23. ເບີກບານຕໍ່ການເລືອກຕັ້ງ
24. ມາເລືອກຜູ້ແທນ
25. ກິລາເພື່ອສຸຂະພາບ
26. ມູນເຊື້ອກິລາລາວ
27. ກິລາປິ່ງປ໋ອງ
28. ຟ້າໃໝ່
29. ແສງສະຫວ່າງມະຕິ 15 ສ.ກ.ພ
30. ຄຸນຄ່າເວລາ
31. ແຮງລົມຂອງປາກ
32. ແພງຊີວິດແພງຊັບສິນ
33. ເສຍພາສີແມ່ນຮັກຊາດ
34. ໃຂສິກຮຽນໃໝ່
35. ນັກຮຽນດີ
36. ນັກຮຽນປະຖົມ ບ້ານສະຫວ່າງ
37. ມີຄວາມຮູ້ສູ່ຄວາມດີ
38. ສີໄມ້ລາຍມືລາວ
39. ມະຫາກຳ ທັດຖະກຳລາວ
40. ນະຄອນຫລວງດວງໃຈ

41. ເຈົ້າຟ້າແຫ່ງຫຼ້າທໍລະນີ
42. ອາດີດເພື່ອນຮ່ວມຫ້ອງຮຽນ
43. ບັກດ່າງມ້າງຄອກ
44. ກຽດຕິຄຸນຄູ
45. ສາຍນ້ຳສາຍໃຈ
46. ຊີບລະປະຫານສາຍເລືອດ
47. ຄວາມຮັກຄວາມແພງ
48. ພົບກັນໃໝ່
49. ສາມັກຄີອາຊຽນ
50. ຕຳຫຼວດຈາລະຈອນ
51. ຕຳຫຼວດສື່ສານ
52. ຄະນຶງຫາຂວັນໃຈ
53. ຄິດຮອດຫຼັກ 20
54. ພອນປີໃໝ່
55. ວັງວຽງວັງງາມ
56. ສາຍໃຈຄືນມະນາຄືນ
57. ອານຸພາບແຫ່ງຄວາມຮັກ
58. ລູກບ້ານທົ່ວຊຽງ
59. ເມືອງແມນແດນສະຫວັນ
60. ກອງທັບກຳແພງເພັດ
61. ພູກູດຈອມເຫຼັກ

ຮຽບຮຽງ: ກົມສິລະປະກຳ

ລວບລວມບົດເພງ: ນ. ພອນສະຫວັນ ສຸວັນນະວົງ

# ເພງຊາດລາວ

✍ ສີສະນະ ສີສານ

ທຳນອງ: ດຣ. ທອງດີ ສູນທອນວິຈິດ

✡ ຊາດລາວຕັ້ງແຕ່ໃດມາ ລາວທຸກຖ້ວນໜ້າເຊີດຊູສຸດໃຈ
ຮ່ວມແຮງຮ່ວມຈິດຮ່ວມໃຈ ສາມັກຄີກັນເປັນກຳລັງດຽວ
ເດັດດ່ຽວພ້ອມກັນກ້າວໜ້າ ບູຊາຊູກຽດຂອງລາວ
ສົ່ງເສີມໃຊ້ສິດເປັນເຈົ້າ ລາວທຸກຊົນເຜົ່າສະເໝີພາບກັນ

✡ ບໍ່ໃຫ້ພວກຈັກກະພັດ ແລະພວກຂາຍຊາດເຂົ້າມາລົບກວນ
ລາວທັງມວນຊູເອກະລາດ ອິດສາລະພາບຂອງຊາດລາວໄວ້
ຕັດສິນໃຈສູ້ຊິງເອົາໄຊ ພາຊາດກ້າວໄປສູ່ຄວາມວັດທະນາ

# ລາວລະບອບໃໝ່

✍ ສຸບັນ ສຸວັນນະວົງ

✡ ຫຼາຍປີມາ ຄົນລາວຂາດສິດເສລີ
ຖືກເຂົາຍ່ຳຍີ ເປັນຂອັຍຂ້າຈັກກະພັດຂີ່ມເຫັງ
ພວກນາຍທຶນ ອາດຍາສັກດີນາໜີບເຕັງ
ຫວັງໃຫ້ຊາດລາວ ຄົນລາວສູນສັ້ງງໄປ

✡ ດວ້ຍນ້ຳໃຈ ຄົນລາວອາດຫານເກັ່ງກ້າ
ໃຕ້ການນຳພາ ພັກປະຊາຊົນ ປະຕິວັດລາວ
ສະຫຼາດສອ່ງໃສ ນຳຊາດລາວ ໃຫ້ກ້າວເດີນໃປ
ຫຼຸດພົ້ນໂພຍໃພ ລະບອບໃໝ່ສອ່ງແສງທາງເດີນ

✡ ມາບັດນີ້ ລາວເຮົາເປັນເຈົ້າ ຂອງປະເທດຊາດ
ຈຶ່ງໄດ້ປະກາດ ລະບອບໃໝ່ ຂອງລາວ ...
ສ້າງສາຊາດ ຮຸ່ງເຮືອງສົດໃສ
ປະຊາທິປະໄຕ ປະຊາຊົນລາວ ...

# 30 ປີມີໄຊ

✎ ສຸບັນ ສຸວັນນະວົງ

✡✡ 30 ປີ — ມີໄຊ ! ມີໄຊ
30 ປີ — ກ້າວໄປ ກ້າວໄປ...
ພັກເຮົາໄດ້ — ຮັບໃຊ້ຊາດຮ່ວມປະຊາ
ພອ້ມກັນສ້າງສາ — ສ. ປ. ປ . ລາວ.....
✡ ຊາດລາວ — ຄົນລາວທ້າວທັນ
ສ້າງສັນ — ໃບໜ້າເມືອງລາວໃໝ່
ແຜ່ນດິນ — ຖານຖິ່ນວິໄລ
ເຮົາພູມໃຈ — ໄຊຊະນະ ລາວເຮົາ
✡✡ 30 ປີ — ມີໄຊ ! ມີໄຊ
2 ທັນວາ — ຍິ່ງໃຫຍ່ . ຍິ່ງໃຫຍ່...
✡ ເຂື່ອນຟາຍ — ຂະຫຍາຍທົ່ວອານາ
ເຄຫາ — ສະຖາບັນເສັ້ນທາງກ້າວ
ໂຮງໝໍໂຮງຮຽນ — ໂຮງງານບັນດາເຜົ່າ
ທົ່ວແດນລາວ — ສະຫງ່າລາສີ
✡ 30 ປີ — ມີໄຊ ! ມີໄຊ
2 ທັນວາ — ຍິ່ງໃຫຍ່ . ຍິ່ງໃຫຍ່...
✡ ທຸງໄຊ — ປິວສະບັດແວ່ວວາວ
ຊົນເຜົ່າ — ເຕົ້າໂຮມສາມັກຄີ
ຮັກຊາດ — ຮັກເຊື້ອເໜືອຊີວີ
ເພື່ອລາວນີ້ — ສຸກຂີຊົ່ວນິລັນດອນ
✡✡ 30 ປີ — ມີໄຊ ! ມີໄຊ
2 ທັນວາ — ຍິ່ງໃຫຍ່ ຍິ່ງໃຫຍ່ ພັກເຮົາໃດ້ ຮັບໃຊ້ຊາດ
ຮ່ວມປະຊາ — ພ້ອມກັນສ້າງສາ ສ. ປ. ປ . ລາວ ......

# ດາວລ້ອມເດືອນ

✍ ສຸບັນ ສຸວັນນະວົງ

✡ ໂອ່ ດວງຈັນ　　ວັນເພັງຈັນງາມສົດໃສ
ຈັນງາມວິໄລ　　ງາມວິໄລພາຍໃຕ້ທ້ອງຟ້າ
ເຮົານີ້ແຫງນມອງ　　ກ້ອງຣິ່ມແປກທີ່ແສງຈັນສ່ອງມາ
ພາໃຫ້ຊື່ນອຸລາ　　ມາພົບຈັນຄວາມເສົ້າຫາຍໄປ

✡ ດວງເດືອນເລື່ອນລອຍ　　ນະພາຮຸ່ງແຈ້ງແວ່ວວາວ
ໝູ່ດາຣາດາວ　　ນ້ອຍໃຫຍ່ ຍິບຍັບບິນຟ້າ
ເໝືອນປາດັບສີ　　ຍ້ອມມະນີສອດສີຈັນທາ
ພຸ້ງແສງແຮງກ້າ　　ທົ່ວອານາອາບແສງດວງຈັນ

✡ ໂອ່ດວງຈັນ　　ເພື່ອນຂ້າງເຈົ້າມີໝູ່ດາວ
ດັ່ງຊາດຂອງລາວ　　ຊາວປະຊາແໜ້ນໜາອ້ອມຂ້າງ
ແສງສ່ອງຂອງເດືອນ　　ເໝືອນສາຍໃຈຄົນລາວມຸ້ງຫວັງ
ພ້ອມກັນເດີນຕາມທາງ　　ສ້າງເມືອງລາວໃຫ້ແຈ້ງເໝືອນເດືອນ

# ຂໍໂທດຫຼາຍໆ

ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...



ດ້ວຍຄວາມຮັກແພງ